ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 4226/ທຄຕລ.......2024....
ນະຄອນຫຼວງວຽງຈັນ, ວັນທີ:....18 DEC 2024.........

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາຜູ້ສະໜອງຢູ່ພາຍໃນ ສປປ ລາວ.

**ເລື່ອງ:** ເຊີນເຂົ້າຮ່ວມການປະມູນລາຄາ ຮັບເໝົາໃຫ້ບໍລິການທ່ອງທ່ຽວປະເທດເກົາຫຼີ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນລາຄາ ໃຫ້ບໍລິການຮັບເໝົາທ່ອງທ່ຽວປະເທດເກົາຫຼີ ດັ່ງມີລາຍການໜ້າວຽກລຸ່ມນີ້:

- ລູກທົວ ຈຳນວນ 20 ທ່ານ.
- ໄລຍະເວລາທ່ອງທ່ຽວ 05 ວັນ 04 ຄືນ.
- ໄລຍະເວລາເດີນທາງຕົວຈິງແມ່ນຊ່ວງ ເດືອນ 03/2025.
- ເດີນທາງດ້ວຍຍົນ ສາຍການບິນ Lao Airlines (ປີ້ໄປ-ກັບ) ທີ່ນັ່ງຊັ້ນ Economy, ນ້ຳໜັກກະເປົາ 20 ກິໂລ.
- ໂຮງແຮມລະດັບ 4 ດາວ (2 ຄົນ/ຫ້ອງ).
- ຄ່າອາຫານທຸກຄາບ, ຄ່າເຂົ້າຊົມສະຖານທີ່ຕ່າງໆຕາມໂປຣແກມທົວ, ຄ່າວີຊ່າ, ລົດ ແລະ ໄກ້ນຳທ່ຽວ.
- ຄ່າປະກັນໄພທ່ອງທ່ຽວ.
- ສະຖານທີ່ເຂົ້າຢ້ຽມຊົມ:
  - ໝູ່ບ້ານແຫ່ງເທບນິຍາຍ, ໝູ່ບ້ານໄຊນ້າທາວ-ເກາະນາມິ-Shopping ຮົງແດ.
  - Shopping ເຄື່ອງສຳອາງ-ສວນສະໜຸກເອເວີ້ແລນ-ຫໍຄອຍກຸງໂຊວ-ຄ້ອງກະແຈຄູ່ຮັກ-ສູນໂສມ-ຮ້ານພອຍ.
  - ຊົມຜະລິດຕະພັນນ້ຳມັນສົນເຂັມແດງ-ຜະລິດຕະພັນສາລ່າຍ-ຕະຫຼາດຊະວັງ-Shopping ຖະໜົນໄວໜຸ່ມຮົງແດ.

➢ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

***ເອກະສານຊອງທີ 1 (ບໍ່ປິດຊອງ):**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດກ່ຽວກັບການບໍລິການທ່ອງທ່ຽວ, ດຳເນີນທຸລະກິດຢ່າງໜ້ອຍ 3 ປີຂຶ້ນໄປ ແລະ ໃຫ້ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດປະຈຳປີ, ໃບຢັ້ງຢືນການເສຍອາກອນ 2021-2023, ປະກອບຂໍ້ມູນຕາມຟອມ ທຄຕລ, ເອກະສານກ່ຽວກັບຜົນງານຜ່ານມາຂອງບໍລິສັດ, ລາຍລະອຽດໂປຼແກຼມທົວ.
2. ສາມາດຍື່ນເອກະສານຂ້າງເທິງໄດ້ ນັບຈາກວັນນີ້ຈົນເຖິງ ວັນພະຫັດ, ທີ 19/12/2024 ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍ pdf ເຂົ້າມາທີ່ Email: procurement@bcel.com.la.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

***ເອກະສານຊອງທີ 2 (ປິດຊອງ)**:

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມໃນ ວັນຄານ, ທີ **14/01/2025 ເວລາ 09:00** ໂມງ ທີ່ຫ້ອງປະຊຸມຊັ້ນ 5/2 ຕຶກ C ສຳນັກງານໃຫຍ່.
2. ໃບສະເໜີລາຄາໃຫ້ລະບຸລາຄາ/ໜ່ວຍ ແລະ ມູນຄ່າລວມທັງໝົດເປັນ **ສະກຸນເງິນກີບ ແລະ ໂດລາ**.
3. ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 20% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໂດຍທະນາຄານພາຍໃນ ສປປ ລາວ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 30/04/2024) ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນໃຫ້ຜູ້ທີ່ບໍ່ຜ່ານການຄັດເລືອກ.

***ໝາຍເຫດ**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ; ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

***ເງື່ອນໄຂສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ການຊຳລະແມ່ນຈ່າຍເປັນ 02 ງວດ: ງວດທີ 1 ຊຳລະ 50% ພາຍຫຼັງເຊັນສັນຍາຕາມລະບຽບ ແລະ ງວດທີ 2 ຊຳລະ 50% ກ່ອນເດີນທາງ 01 ອາທິດ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ນ. ພູແສງທອງ ອານຸລັກຄຳ**

ຕິດຕໍ່ພົວພັນ:

021 213200 ຕໍ່ 0

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............./ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ | ໂປຼແກຼມທົວ | |
| 1 | ບ/ສ......... | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | .... ປີ | (ໃຫ້ລະບຸ) | | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະແຈ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ......................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: